ຂ່າວ NEWS
ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຊາວບ້ານຫ້ວຍລ້າຮັບສິນເຊື່ອນະໂຍບາຍແບບໃໝ່



ໃນວັນທີ 8 ກັນຍາ 2020, ທ່ານ ປັນຍາສະໄຫວ ຣັດຖະເສນາ ຫົວໜ້າທະນາຄານນະໂຍບາຍ (ທນບ) ໜ່ວຍບໍລິການເມືອງສັງທອງ, ນະຄອນຫຼວງວຽງຈັນ ພ້ອມຄະນະ ໄດ້ເຄື່ອນໄຫວເຮັດວຽກຢູ່ບ້ານຫ້ວຍລ້າ, ເມືອງດັ່ງກ່າວ ຊຶ່ງຕົ້ນຕໍແມ່ນການຮັບຊໍາລະດອກເບ້ຍເງິນກູ້ຢືມນໍາຫົວໜ້າກຸ່ມຈໍານວນ 5 ກຸ່ມໄດ້ຢ່າງຄົບຖ້ວນຕາມລະບຽບການ 100% ໂດຍບ້ານ ຫ້ວຍລ້າ ເປັນບ້ານແຫ່ງທີ່ 3 ທີ່ ທນບ ໄດ້ນໍາເອົາບົດຮຽນຂອງ ທນບ ສັງຄົມຫວຽດນາມມາເຮັດທົດລອງປ່ອຍສິນເຊື່ອຜ່ານອົງການຈັດຕັ້ງການເມືອງ-ສັງຄົມ ແລະ ກອງທຶນຂັ້ນບ້ານ (ອກສກ) ໃນຮູບແບບທະນາຄານມອບສິດໃຫ້ຄະນະກໍາມະການຄຸ້ມຄອງສິນເຊື່ອຂອງ ທນບ ຂັ້ນບ້ານເຮັດໜ້າທີ່ແທນທະນາຄານ (ໜ້າທີ່, ສິດ, ຂອບເຂດ, ຄວາມຮັບຜິດຊອບຂອງແຕ່ລະຝ່າຍໄດ້ກໍານົດໄວ້ໃນສັນຍາມອບສິດຕ່າງຫາກ) ແລະ ເປັນເດືອນທໍາອິດທີ່ພະນັກງານ ທນບ ໜ່ວຍບໍລິການເມືອງ ສັງທອງ ໄດ້ລົງເກັບກູ້ເອົາຕົ້ນທຶນ ແລະ ດອກເບ້ຍເງິນດັ່ງກ່າວພາຍຫຼັງການປ່ອຍເງິນກູ້ເປົ້າໝາຍຜະລິດໂຄງການນາປີ 2020 ຜ່ານມາ ແລະ ເຫັນວ່າຄະນະກໍາມະການ, ຫົວໜ້າກຸ່ມ-ຮອງກຸ່ມ ແລະ ສະມາຊິກກຸ່ມກູ້ຢືມມີຄວາມເຂົ້າໃຈ ແລະ ໃຫ້ການຮ່ວມມືເປັນຢ່າງດີໃນວຽກງານດັ່ງກ່າວໂດຍໄດ້ກໍານົດມື້ລົງເຮັດວຽກຢູ່ໃນວັນທີ 7 ຂອງທຸກໆເດືອນກໍລະນີຖືກວັນເສົາ ແລະ ອາທິດຈະເລື່ອນມື້ລົງຫຼືເປັນມື້ຖັດໄປ.

ທ່ານ ປັນຍາສະໄຫວ ຣັດຖະເສນາ ຢັ້ງຢືນວ່າ: ສະເພາະໃນເດືອນກັນຍານີ້, ທນບ ໜ່ວຍບໍລິການເມືອງສັງທອງຈະລົງເຮັດວຽກ ອກສກ ກັບອີກ 13 ບ້ານທີ່ເຫຼືອໃຫ້ສໍາເລັດຕາມແຜນທີ່ວາງໄວ້. ປະຈຸບັນ, ທນບ ໜ່ວຍບໍລິການເມືອງສັງທອງໄດ້ເຮັດບ້ານທົດລອງ ອກສກ ແລ້ວຈໍານວນ 14 ບ້ານທົ່ວເມືອງສັງທອງ ແລະ ຈະມີແຜນຂະຫຍາຍຕື່ມໃນປີ 2021 ອີກຕາມການເຫັນດີຂອງຄະນະກໍາມະການສິນເຊື່ອຂັ້ນເມືອງ, ຂັ້ນບ້ານບົນຈິດໃຈຄວາມເປັນເອກະພາບຂອງປະຊາຊົນຢູ່ບ້ານນັ້ນໆ.

ທ່ານ ປັນຍາສະໄຫວ ຣັດຖະເສນາ ຍັງແຈ້ງຕື່ມອີກວ່າ: ການເຄື່ອນໄຫວວຽກງານດັ່ງກ່າວ ນອກຈາກຈະເປັນການຈັດຕັ້ງປະຕິບັດໜ້າທີ່ວິຊາສະເພາະຂອງ ທນບ ໜ່ວຍບໍລິການເມືອງສັງທອງແລ້ວ ຍັງເປັນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ V ຂອງຜູ້ແທນອົງຄະນະພັກເມືອງສັງທອງ ກໍ່ຄືເປັນການສ້າງຜົນງານຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ ຄັ້ງທີ IV ຂອງຜູ້ແທນອົງຄະນະພັກ ທະນາຄານແຫ່ງ ສປປ ລາວ ທີ່ຈະເປີດຂຶ້ນໃນມໍ່ໆນີ້.

**# ຂ່າວ: ຣັດສະໝີ ດວງສັດຈະ**

## ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນໍາໃຊ້ເງິນກີບ